Washington State Department of Social & Health Services
ESA Economic Services Administration

# ຈົດໝາຍນັດພົບສຳລັບພະແນກເກັບເງິນລ້ຽງເດັກ(DCS) ການພິຈາລະນາເບິ່ງເຣື່ອງມີເຫດຜົນທີ່ດີ

## Appointment Letter for Division of Child Support (DCS) Good Cause Determination

ວັນທີ: ເລກລູກຄ້າ:

ເຖິງ:

ມາຍັງ ,

ທ່ານໄດ້ຮ້ອງຂໍເອົາເຫດຜົນທີ່ດີ ແລະ ບອກຫ້ອງການບໍຣິການຊຸມນຸມຊົນທ້ອງຖິ່ນຂອງທ່ານວ່າທ່ານບໍ່ສາມາດຊ່ວຍພະແນກເກັບເງິນລ້ຽງເດັກ (DCS) ເພື່ອຈະເກັບເງິນລ້ຽງລູກ ແລະ/ຫລື ຄ່າພະຍາບານ. ພະແນກ DCS ເອົາການບໍຣິການບັງຄັບເກັບເງິນລ້ຽງເດັກເຕັມທີ່ໃຫ້ເມື່ອທ່ານໄດ້ຮັບເງິນ TANF. ການບໍຣິການເຫລົ່ານີ້ອາດຈະລວມເອົາພະແນກ DCS ທີ່ຈະກໍ່ຕັ້ງສາຍເລືອດພໍ່ລູກ, ການສັ່ງອອກມາ ແລະ/ຫລື ການບັງຄັບໃຊ້ຄຳສັ່ງຈ່າຍເງິນລ້ຽງລູກ, ຫລື ການບັງຄັບຄວາມຮັບຜິດຊອບຂອງພໍ່ແມ່ຝ່າຍອື່ນທີ່ຈະເອົາປະກັນພັຍສຸຂະພາບໃຫ້ ແລະ ຈ່າຍຊ່ວຍສ່ວນແບ່ງຂອງຄ່າໃຊ້ຈ່າຍການພະຍາບານທີ່ບໍ່ຖືກຮັບປະກັນຈ່າຍໃຫ້ຂອງເຂົາເຈົ້າສຳລັບລູກຂອງເຂົາເຈົ້າ.
ຂ້າພະເຈົ້າໄດ້ຈັດໃຫ້ມີໝາຍນັດພົບຕໍ່ລົງໄປນີ້ໄວ້ຕ່າງຫາກເພື່ອຈະເວົ້າລົມກັບທ່ານກ່ຽວກັບຄຳຮ້ອງຂໍເອົາເຫດຜົນທີ່ດີຂອງທ່ານເພື່ອຈະຢຸດການປະຕິບັດການຕ່າງໆໃນເງິນລ້ຽງລູກ ແລະການກະທຳອູ້ມຊູດ້ານການພະຍາບານ.

____________________________ __________________ __________________
ທີ່ຢູ່ ວັນທີ ເວລາ

ຖ້າທ່ານບໍ່ສາມາດມາ, ກະຣຸນາໂທຫາຂ້າພະເຈົ້າທີ່ເລກ __________________ ກ່ອນວັນທີ ____________. **ຖ້າທ່ານບໍ່ໂທມາ ຫລື ເຂົ້າມາຕາມໝາຍນັດພົບຂອງທ່ານ, ຂ້າພະເຈົ້າອາດຈະປະຕິເສດຄຳຮ້ອງຂໍເອົາເຫດຜົນທີ່ດີຂອງທ່ານ.**

ຂ້າພະເຈົ້າຈະອະນຸມັດຄຳຮ້ອງຂໍເອົາເຫດຜົນທີ່ດີອັນນີ້ຖ້າມັນຖືກສະແດງໃຫ້ເຫັນວ່າ:

- ທ່ານຢ້ານກົວວ່າທ່ານ ຫລື ເດັກນ້ອຍຢູ່ໃນການເບິ່ງແຍງດູແລຂອງທ່ານຈະຖືກເປັນອັນຕະຣາຍຮ້າຍແຮງທາງດ້ານຮ່າງກາຍ ຫລື ຈິດໃຈ.
- ລູກຂອງທ່ານໄດ້ເກີດມາຈາກການຂົ່ມຂືນຊຳເລົາ ຫລື ການຮ່ວມເພດນຳຄົນໃກ້ສິດກັນ.
- ທ່ານໄດ້ເລີ້ມຕົ້ນການດຳເນີນການເອົາມາເປັນລູກລ້ຽງ, ຫລື ທ່ານຢູ່ໃນການໃຫ້ຄຳປຶກສາ (ຮອດເວລາສາມເດືອນ) ນຳອົງການຈັດຫາບ່ອນຢູ່ໃຫ້ເດັກນ້ອຍກ່ຽວກັບການຮັບເອົາມາເປັນລູກລ້ຽງ.

ໃນການນັດພົບອັນນີ້, ທ່ານສາມາດຂຽນຂໍ ຄວາມທີ່ຖືກເຊັນຊື່ໃສ່ຊຶ່ງອະທິບາຍເຖິງຄວາມຂ້ອງໃຈ ແລະ ຄວາມຢ້ານກົວຂອງທ່ານ. ທ່ານຍັງສາມາດນຳເອົາຣາຍຣະອຽດແນວອື່ນມານຳທ່ານທີ່ອູ້ມຊູຄຳຮ້ອງຂໍຂອງທ່ານໄດ້ອີກຄືກັນ, ຖ້າມີຢູ່. ຕົວຢ່າງບາງຢ່າງແມ່ນ:

- ລາຍງານຕຳຣວດ;
- ລາຍງານການພະຍາບານ;
- ລາຍງານຈາກສານ;
- ຄຳສັ່ງປ້ອງກັນຍ້ອນຄວາມຮຸນແຮງໃນຄອບຄົວ;
- ໜັງສືແຈ້ງການຈາກຫົວໜ້າໂບດ, ໝູ່ຄູ່ທັງຫລາຍ, ຍາດພີ່ນ້ອງ, ເພື່ອນບ້ານ, ໝູ່ຮ່ວມວຽກທັງຫລາຍທີ່ອະທິບາຍເຖິງອັນຕະຣາຍ;
- ໜັງສືຈາກບ່ອນພັກອາສັຍສຳລັບຄວາມຮຸນແຮງໃນຄອບຄົວ; ຫລື
- ໜັງສືຈາກຜູ້ປຶກສາສຳລັບຄວາມຮຸນແຮງຕາມຄອບຄົວ.

**ຈະມີຫຍັງເກີດຂຶ້ນໃນການນັດພົບອັນນີ້?**

- ທ່ານຈະສາມາດອະທິບາຍວ່າເປັນຫຍັງທ່ານຈຶ່ງຢ້ານກົວວ່າການເກັບເງິນລ້ຽງເດັກ ແລະ ການພະຍາບານນີ້ຈະເປັນອັນຕະຣາຍແກ່ທ່ານ ຫລື ລູກຂອງທ່ານ.
- ພວກເຮົາສາມາດເວົ້າກ່ຽວກັບຄວາມຊ່ວຍເຫລືອແນວອື່ນທີ່ທ່ານອາດຕ້ອງການເພື່ອຈະຢູ່ດ້ວຍຄວາມປອດພັຍ.

**ຈະມີຫຍັງເກີດຂຶ້ນຖ້າທ່ານບໍ່ເອົາໃຫ້ໃບແຈ້ງການທີ່ຖືກເຊັນຊື່ໃສ່ແລ້ວ ຫລື ຣາຍຣະອຽດແນວອື່ນເພື່ອຈະສະແດງວ່າເປັນຫຍັງການເກັບເງິນລ້ຽງເດັກ ແລະ/ຫລື ການພະຍາບານນັ້ນຈະເປັນອັນຕຣາຍແກ່ທ່ານ ຫລື ລູກຂອງທ່ານ?**

- ຄຳຮ້ອງຂໍຂອງທ່ານຈະຖືກປະຕິເສດຖ້າຫາກວ່າພວກເຮົາບໍ່ພົບເຫັນວ່າເຫດຜົນທີ່ຖືກເອົາໃຫ້ມານັ້ນສອດຄ່ອງນຳກົດກຳນົດສຳລັບການອະນຸມັດເຫດຜົນດີ ແລະ
- ສຳນວນເອກສານຂອງທ່ານຈະຖືກສົ່ງໄປຫາພະແນກ DCS ເພື່ອຈະເປີດສຳນວນເອກສານເກັບເງິນລ້ຽງລູກສຳລັບການບໍຣິການບັງຄັບເກັບເງິນລ້ຽງລູກເຕັມທີ່.
- ມັນອາດຈະມີຜູ້ຊ່ວຍເຫລືອເຣື່ອງຄວາມຮຸນແຮງໃນຄອບຄົວຢູ່ຕາມຫ້ອງການ CSO ທ້ອງຖິ່ນຂອງທ່ານ ຫລື ຢູ່ໃນຊຸມນຸມຊົນຂອງທ່ານ ຜູ້ທີ່ສາມາດມີເວລາວ່າງທີ່ຈະເຂົ້າມາຮ່ວມນຳການພົບກັນອັນນີ້ນຳທ່ານ. ຕິດຕໍ່ຫາຫ້ອງການ CSO ທ້ອງຖິ່ນຂອງທ່ານເພື່ອຣາຍຣະອຽດເພີ້ມເຕີມ.

**ຖ້າທ່ານບໍ່ເຫັນພ້ອມກັບການຕັດສິນຂອງພວກເຮົາເດ?**

1. ທ່ານສາມາດໂທຫາຫ້ອງການບໍຣິການຊຸມນຸມຊົນທ້ອງຖິ່ນຂອງທ່ານໄດ້ ຫລື ຂຽນຫາຫ້ອງການໆປົກຄອງຟັງເຣື່ອງໄດ້ທີ່ Office of Administrative Hearings, PO Box 42489, Olympia WA 98504-2489 ພາຍໃນ 90 ມື້ ເພື່ອຂໍເອົາການຟັງເຣື່ອງ. ຖ້າທ່ານຂໍເອົາການຟັງເຣື່ອງ, ທາງພະແນກ DCS ຈະບໍ່ທັນເລີ່ມເຮັດວຽກກັບສຳນວນເອກສານຂອງທ່ານເທື່ອ ຈົນກວ່າຄຳຕັດສິນຂອງການຟັງເຣື່ອງເປັນອັນສຸດຂາດ.ທະນາຍຄວາມຫລືບຸກຄົນອື່ນສາມາດເປັນຕົວແທນຂອງທ່ານໃນເວລາຟັງເຣື່ອງ, ຫລືວ່າ ທ່ານສາມາດເປັນຕົວແທນຂອງທ່ານເອງໄດ້.
2. ຖອນຄຳຮ້ອງຂໍຂອງທ່ານສຳລັບການຊ່ວຍເຫລືອ TANF. ເຖິງຢ່າງໃດກໍຕາມ, ພະແນກ DCS ອາດຈະເຮັດວຽກໃນສຳນວນເອກສານຂອງທ່ານສຳລັບເວລາທີ່ທ່ານໄດ້ຮັບເງິນ TANF ຢູ່.
3. ດຳເນີນທີ່ຈະຮັບເອົາການຊ່ວຍເຫລືອຕໍ່ໄປ ແລະ ບໍ່ເຂົ້າຮ່ວມໃນການດຳເນີນການເກັບເງິນລ້ຽງລູກ. ເຖິງຢ່າງໃດກໍຕາມ, ຖ້າຫາກວ່າທ່ານບໍ່ເຂົ້າຮ່ວມໃນການດຳເນີນການເກັບເງິນລ້ຽງລູກ, ພະແນກ DCS ຈະດຳເນີນທີ່ຈະເຮັດວຽກໃສ່ສຳນວນເອກສານຂອງທ່ານ ແລະ ການຊ່ວຍເຫລືອເງິນຂອງທ່ານອາດຈະລຸດລົງໂດຍ 25% ຖ້າຫາກວ່າຄຳຮ້ອງຂໍເອົາເຫດຜົນທີ່ດີໄດ້ຖືກປະຕິເສດ.

ທະນາຍຄວາມ ຫລື ບຸກຄົນໃດບຸກຄົນນຶ່ງທີ່ທ່ານເລືອກເອົາສາມາດເປັນຕົວແທນໃຫ້ທ່ານໄດ້ໃນຕອນຟັງເຣື່ອງ, ຫລື ທ່ານສາມາດແທນຕົວໃຫ້ທ່ານເອງກໍ່ໄດ້.

**ທ່ານສາມາດເອົາຄຳແນະນຳດ້ານກົດໝາຍ ຫລື ການຕາງໜ້າໃຫ້ໄດ້ບໍ່?**

ທ່ານສາມາດໂທຫາສາຍບໍຣິການດ້ານກົດໝາຍທີ່ວຣັດໄດ້ທີ່ເລກ 1-888-201-1014.